ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------000000-------------

ບໍລິສັດ ອີທີແອລ ມະຫາຊົນ

ພະແນກ ບໍລິຫານ

ວັນທີ 06 / 12 / 2012

# ບົດສະຫຼຸບ

ແຜນວຽກປະຈໍາອາທິດ ແລະ ທິດທາງແຜນການປະຕິບັດວຽກອາທິດຕໍ່ໄປ ຂອງພະແນກ ບໍລິຫານ

## I. ວຽກທີ່ປະຕິບັດໃນອາທິດຜ່ານມາ:

ວຽກຫ້ອງການ:

- ສໍາເລັດການແຈກຢາຍເງິນຍາມປະຈໍາເດືອນ 10.
- ແກ້ໄຂເອກະສານປະຈໍາວັນ, ເອກະສານເບີຈ່າຍ, ຂໍ້ຕົກລົງ.
- ຈັດຫ້ອງປະຊຸມ, ເພື່ອອໍານວຍຄວາມສະດວກໃຫ້ແກ່ການປະຊຸມ.
- ສໍາເລັດການມອບເຄື່ອງອຸປະຖໍາໃຫ້ແກ່ພາກສ່ວນພາຍນອກ.
- ສໍາເລັດແລ່ນເອກະສານເດີນທາງໃຫ້ພະນັກງານໄປຕ່າງແຂວງເປັນຈໍານວນ 7ຊຸດ.
- ຈັດສິ່ງເຄື່ອງຫຼືອຸປະກອນຕ່າງໆໃຫ້ບັນດາ ສາຂາແຂວງ ອທອ.
- ສໍາເລັດການຕິດຕັ້ງຮາວປະຕູກັນໃສ່ສູນກາງໂທລະສັບມືຖືຫຼັກ 21.
- ສໍາເລັດການລະດົມພະນັກງານໄປອອກແຮງງານຢູ່ຫຼັກ 21 ເນື່ອງໃນໂອກາດຕ້ອນຮັບວັນຊາດທີ 2 ທັນວາ ແລະ ວັນຄ້າຍວັນເກີດທ່ານ ປະທານ ໄກສອນ ພົມວິຫານ.

ວຽກງານຄຸ້ມຄອງຊັບສິນ:

- ຕິດຕາມໃສ່ລະຫັດຊັບສິນເກີດຂຶ້ນໃໝ່ໃນເດືອນ.
- ເບີກຈ່າຍປະຈໍາວັນບັດ, ເຄື່ອງສົ່ງເສີມການຂາຍ, ອຸປະກອນຕິດຕັ້ງ.
- ຕິດຕາມການເບີກຈ່າຍຄ່ານໍາໃຊ້ກະແສໄຟຟ້າ, ນໍ້າປະປາ, ຄ່າເຊົ່າເຮືອນ, ຄ່າເກາະຫ້ອຍສາຍ, ຄ່າພາສີດິນປະຈໍາປີ.
- ກະກຽມ ລົງສໍາຫຼວດວັດແທກດິນ ຮ່ວມກັບກະຊວງ ຊັບພະຍາກອນ ສິ່ງແວດລ້ອມຢູ່ບັນດາ ສາຂາ ອທອ.
- ສະຫຼຸບບັນຊີສາງພາຍໃນເດືອນ, ງວດ, ປີ.
- ກະກຽມເອກະສານ (ເພື່ອກຽມຮ່ວມກວດການັບທ້າຍປີ).
- ສູນບໍລິການເມືອງປາກລາຍ ປະຈຸບັນສໍາເລັດ 75 %(ອາຄານຊັ້ນ 2) ແລະ ສູນບໍລິການເມືອງຫົງສາ ປະຈຸບັນສໍາເລັດ 70 %.
- ສູນບໍລິການເມືອງຮຸນ ປະຈຸບັນສໍາເລັດ 70 % ແລະ ສູນບໍລິການເມືອງນໍ້າຖ້ວມ ປະຈຸບັນສໍາເລັດ 60 %.
- ສູນບໍລິການເມືອງພູຄູນ ປະຈຸບັນສໍາເລັດ 50 % ແລະ ສູນບໍລິການເມືອງນາມອນ ປະຈຸບັນສໍາເລັດ 85 %.
- ກໍ່ສ້າງອາຄານຫ້ອງການ ແຂວງຫົວພັນ ປະຈຸບັນສໍາເລັດ 95 % ແລະ ກໍ່ສ້າງອາຄານຫ້ອງການ ແຂວງຊຽງຂວາງ ປະຈຸບັນສໍາເລັດ 45 %.
- ອາຄານ ປ່ອງບໍລິການເມືອງສອງຄອນ ປະຈຸບັນສໍາເລັດ 60% ( ອາຄານ 2ຊັ້ນ) ແລະ ປ່ອງບໍລິການເມືອງຄົງເຊໂດນ ປະຈຸບັນສໍາເລັດ 60 %.
- ອາຄານ ປ່ອງບໍລິການເມືອງດາກຈຶງ ປະຈຸບັນສໍາເລັດ 30%.
- ຮ່ວມກັບພະແນກ ບັນຊີ ໄປແນະນໍາການໃສ່ລະຫັດຊັບສິນ ຢູ່ສາຂາ ອທອ ພາກເໜືອ: ແຂວງ ຜົ້ງສາລີ, ອຸດົມໄຊ, ຫຼວງນໍ້າທາ, ບໍ່ແກ້ວ, ໄຊຍະບູລີ.
- ກະກຽມ ຈັດຫາຜູ້ມາຕົບແຕ່ງ ປັບປຸງ Container ໃຫ້ພະແນກ ບັນຊີ ເພື່ອເຮັດສາງເກັບເອກະສານ.

- <u>ວຽກງານຄຸ້ມຄອງພາຫະນະ</u>:
- ຈັດພາຫະນະຮັບໃຊ້ວຽກ ຕາມການສະເໜີຂອງ ແຕ່ລະພະແນກການ.
- ເບີກຈ່າຍ ແລະ ຄຸ້ມຄ້ອງນ້ຳມັນເຊື້ອໄຟ ແລະ ບຳລຸງຮັກສາ ພາຫະນະທີ່ເປ່ເພ.

<u>ວຽກງານຈັດຊື້</u>:

- ສຳເລັດການຈັດຊື້ໂຕະຕັ່ງໃຫ້ພະແນກ ໄອຊີທີ.
- ການຈັດຊື້ພາຫະນະຮັບໃຊ້ວິຊາສະເພາະ (Toyota 4win) ກຳລັງເຮັດສັນຍາ.
- ການຈັດຊື້ວີ ເຮັດສັນຍາແລ້ວ.
- ການຈັດພິມໃບບິນຮັບເງິນສະເພາະແມ່ນ ເຮັດສັນຍາແລ້ວ.
- ການຈັດຊື້ບຳມີກຢູ່ໃນຂັ້ນຕອນການປະມູນ.
- ຈັດຊື້ເຄື່ອງ Notbook, printer, ໂທລະສັບ ໄດ້ຮັບເຄື່ອງແລ້ວ ແລະ ເສື້ອເຮັດສັນຍາແລ້ວ ສຳລັບອຸປະກອນກິລາ ມະຫາວິທະຍາໄລອາຊຽນ.
- ການຕິດຕັ້ງກ້ອງວົງຈອນປິດເພີ້ມ ໃສ່ໜ້າປະຕູາງເຂົ້າຫ້ອງເຄື່ອງຊັ້ນ 3 (ຊັ້ນ 3, ຕຶກເກົ່າ ອາຄານ 4 ຊັ້ນ) ແລະ ຈັດຊື້ ຈໍໂທລະພາບສຳລັບຕິດຕາມກ້ອງວົງຈອນປິດ ຢູ່ປ້ອມຍາມ 1 ໜ່ວຍ ແລະ ຢູ່ສູນກາງໂທລະສັບ ຈຳນວນ 2 ໜ່ວຍ ພ້ອມອຸປະກອນຕິດຕັ້ງ ແມ່ນຢູ່ໃນຂັ້ນຕອນຄົ້ນຄ້ວາ ແລະ ປຶກສາຫາລື.
- ການຈັດຊື້ ອຸປະກອນສຳຮອງອຸປະກອນສື່ສານ ຢູ່ໃນຂັ້ນຕອນຕໍ່ລອງລາຄາ.
- ການຈັດຊື້ Software License ນຳບໍລິສັດ Huawei ຢູ່ໃນຂັ້ນຕອນແຕ່ງຕັ້ງຄະນະຮັບຜິດຊອບ.

<u>ວຽກກໍ່ສ້າງຕິດຕັ້ງ</u>:

- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງຫຼວງພະບາງ ຈຳນວນ 04 ສະຖານີ, ຢູ່ໃນຂັ້ນຕອນດຳເນີນການກໍ່ສ້າງ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ໄຊຍະບູລີ ຈຳນວນ 08 ສະຖານີ, ຢູ່ໃນຂັ້ນຕອນດຳເນີນການກໍ່ສ້າງ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ໄຊຍະບູລີ ຈຳນວນ 03 ສະຖານີ, ຢູ່ໃນຂັ້ນຕອນດຳເນີນການກໍ່ສ້າງ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງ BTS ຢູ່ແຂວງຫຼວງນ້ຳທາ ຈຳນວນ 02 ສະຖານີ, ແມ່ນຢູ່ໃນຂັ້ນຕອນດຳເນີນການກໍ່ສ້າງ (ແຂວງ ເຮັດສັນ ຍາເອງ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ອຸດົມໄຊ ຈຳນວນ 09 ສະຖານີ, ຢູ່ໃນຂັ້ນຕອນດຳເນີນການກໍ່ສ້າງ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ບໍ່ແກ້ວ ຈຳນວນ 06 ສະຖານີ, ເຮັດສັນຍາແລ້ວ (ແຂວງເຮັດສັນຍາເອງ) ຢູ່ໃນຂັ້ນຕອນດຳເນີນການກໍ່ສ້າງ.
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງ ຫົວພັນ ຈຳນວນ 07 ສະຖານີ ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ ຢູ່ແຂວງຜົ້ງສາລີ ຈຳນວນ 05 ສະຖານີ, ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງສະຖານີ BTS ຢູ່ເຂື່ອນໄຟຟ້າ ນ້ຳອູ 5, ແຂວງຜົ້ງສາລີ , ຕໍ່ລອງລາຄາແລ້ວ. ຢູ່ໃນຂັ້ນຕອນເຮັດສັນຍາ (ແຂວງເຮັດສັນຍາເອງ).
- ການກໍ່ສ້າງສະຖານີ BTS ແລະ ຕິດຕັ້ງໄຟຟ້າ ຢູ່ເຂດພາກກາງ ແລະ ເຂດພາກໃຕ້ ຈຳນວນ 47 ສະຖານີ, ຢູ່ໃນຂັ້ນຕອນດຳເນີນການກໍ່ສ້າງ (ກຳນົດສຳເລັດໂຄງການແມ່ນ 90 ວັນ).
- ການຕິດຕັ້ງໄຟຟ້າເຂົ້າສະຖານີ BTS ເມືອງຮາມ ແລະ ນ້ຳເບີນ ແຂວງ ຫົວພັນ ແມ່ນຢູ່ໃນຂັ້ນຕອນລໍຖ້າເປີດຊອງທາບທາມລາຄາ (ມອບໃຫ້ ອທອ ສາຂາ ແຂວງ ທາບທາມລາຄາຢູ່ແຂວງເລີຍ).

- ການປັບປຸງ, ບໍາລຸງຮັກສາ, ສ້ອມແປງ ແລະ ຕິດຕັ້ງສາຍໃຍແກ້ວ ຢູ່ໃນຂັ້ນຕອນແຕ່ງຕັ້ງຄະນະຮັບຜິດຊອບ.
- ການແຍກອຸປະກອນ BTS ETL ອອກຈາກ BTS MOD ແມ່ນຢູ່ໃນຂັ້ນຕອນຕໍ່ລອງລາຄາ.
- ການຖອນມ້າງ, ຍົກຍ້າຍ, ຕິດຕັ້ງ BTS ແລະ Microwave ແມ່ນຢູ່ຂັ້ນຕອນເຮັດສັນຍາ.

<u>ວຽກນໍາເຂົ້າ:</u>

- ນໍາເຂົ້າ ໜ່ວຍສະບາຍດີແອັດໂຮມ ຂອງ AGap ຈໍານວນ 1000 ໜ່ວຍ.
- ນໍາເຂົ້າ Air card ຈານວນ 1000 ໜ່ວຍ.

## II. <u>ແຜນວຽກອາທິດຕໍ່ໄປ:</u>

- ລົງຢາຍເງິນເດືອນຍາມຜູ້ເຝົ້າຍາມບັນຫາ BTS ແລະ RSU ຢູ່ນະຄອນຫຼວງວຽງຈັນ ແລະ ສໍາຫຼວດການຖາງຫຍ້າ, ໄຟຟ້າ-ນໍ້າປາປາ.
- ລົງເຮັດສັນຍາເຝົ້າຍາມ ແລະ ອານາໄມ BTS ແລະ RSU ປະຈໍາປີ 2013.
- ຈັດພິທີມອບເຄື່ອງອຸປະຖໍາ, ເງິນອຸປະຖໍາໃຫ້ແກ່ພາກສ່ວນພາຍນອກ.
- ສືບຕໍ່ໃສ່ລະຫັດຊັບສິນທີ່ເກີດຂຶ້ນໃໝ່ ແລະ ສືບຕໍ່ຮັບເຂົ້າ-ຈ່າຍອອກ ບັດ, ຊິມ, ເຄື່ອງສົ່ງເສີມການຂາຍ.
- ກະກຽມແຜນຈັດຊື້ ກະຕ່າຂອງຂວັນເພື່ອ ອວຍພອນການນໍາ ແລະ ລູກຄ້າ ປະຈໍາປີ 2013 (ກໍາລັງປະກອບໃບສະເໜີ).
- ສົມທົບກັບພະແນກບັນຊີໄປແນະນໍາການໃສ່ລະຫັດຊັບສິນ ພາກເໜືອ.
- ສືບຕໍ່ ຕົບແຕ່ງ ສູນບໍລິການດົງໂດກ ແລະ ສູນບໍລິການ ຈິ່ນາຍໂມ້.
- ສືບຕໍ່ ການຈັດຊື້ນໍາມັນກຍັງຢູ່ໃນຂັ້ນຕອນການປະມູນ.
- ສືບຕໍ່ ການຮ່ວມມືຂະຫຍາຍເຄືອຂ່າຍ FTTX, Wireless Internet ແລະ FIWI Internet ແມ່ນຢູ່ໃນຂັ້ນຕອນລໍຖ້າ ບໍລິສັດ ສີງລາວ, ບໍລິສັດ ລາວໝັ້ນຄົງ ແລະ ບໍລິສັດ Wiltelcom ສັງລວມ ແລະ ສົ່ງຂໍ້ມູນທັງໝົດໃນການຮັບຜິດ ຊອບໃນການລົງທຶນ, ການບໍາລຸງຮັກສາ ແລະ ແບ່ງປັນລາຍຮັບ ຂອງທັງສອງຝ່າຍໃນການຮ່ວມທຶນ.
- ສືບຕໍ່ ການຈັດຊື້ ອຸປະກອນສໍາຮອງ ລະບົບ Micro wave ແມ່ນຢູ່ໃນຂັ້ນຕອນ ມອບໃຫ້ ພະແນກ ໄອຊີທີ ເຈລະຈາເງື່ອນໄຂການຕ່າງໆ (ເງື່ອນໄຂການຊໍາລະເງິນ, ການຮັບປະກັນສິນຄ້າ ແລະ ການບໍລິການຫຼັງການຂາຍ) ກັບ ບໍລິສັດຕົວແທນຜູ້ສະໜອງ ອຸປະກອນສໍາຮອງ ລະບົບ Micro wave ຍີ່ຫໍ້ NEC. ຫຼັງຈາກນັ້ນຄະນະຮັບຜິດຊອບ ຈະປະຊຸມກັນໃນວັນທີ 08/11/2012 ເພື່ອຄົ້ນຄ້ວາ, ປຶກສາຫາລື ແລະ ລາຍງານຜົນໃຫ້ ປະທານກໍາມະການຜູ້ບໍລິຫານມີຄໍາຄິດເຫັນໃນການປະຕິບັດໃນຂັ້ນຕອນຕໍ່ໄປ.

## III. <u>ວຽກຕາມບົດບັນທຶກສ່ອງແສ່ງ:</u>

- ທາງພະແນກ ບໍລິຫານ ສໍາເລັດການສ້າງຂະບວນການ ຕ້ອນຮັບວັນຊາດທີ 2 ທັນວາ ແລະ ວັນຄ້າຍວັນເກີດທ່ານປະທານ ໄກສອນ ພົມວິຫານ.

## IV. <u>ວຽກຄ້າງ:</u>

- ທາງພະແນກ ບໍລິຫານ ໂທລົງທະບຽນລູກຄ້າຍັງເຫຼືອຈໍານວນ 2000 ເບີ.

## V. <u>ຂໍ້ສະເໜີ:</u>

- ໃຫ້ ພະແນກການທີ່ກ່ຽວຂ້ອງເກັບມ້ຽນເຄື່ອງໃຫ້ເປັນລະບຽບພາຍຫຼັງສໍາເລັດເສັດສິ້ນຈາກວຽກງານທີ່ໄດ້ເຄື່ອນໄຫວຜ່ານ.

ຫົວໜ້າພະແນກ

ສຸພາລັກ ມັ້ງໜໍ່ເ...